ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ອຸດສາຫະກຳ ແລະ ການຄ້າ ເລກທີ 2358/ອຄ.ຜຮ

ນະຄອນຫລວງວຽງຈັນ, ວັນທີ 18 ທັນວາ 2013

# ຄຳສັ່ງ

ເຖິງ: ຫ້ອງການກະຊວງ, ບັນດາກົມ, ສະຖາບັນຄົ້ນຄວ້າເສດຖະກິດການຄ້າ ແລະ ບັນດາພະແນກ ອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫລວງວຽງຈັນ.

ເລື່ອງ: ການຈັດຕັ້ງຜັນຂະຫຍາຍດຳລັດ 241/ນຍ ແລະ ການຈັດຕັ້ງປະຕິບັດແຜນພັດທະນາຂະແໜງອຸດສາຫະກຳ ແລະ ການຄ້າ ແລະ ແຜນງົບປະມານ ປະຈຳສົກປີ 2013-2014.

- ອີງຕາມດຳລັດ ນາຍົກລັດຖະມົນຕີ ສະບັບເລກທີ 522/ນຍ, ລົງວັນທີ 23 ທັນວາ 2011 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງ ອຸດສາຫະກຳ ແລະ ການຄ້າ;
- ອີງຕາມດຳລັດ ນາຍົກລັດຖະມົນຕີ ສະບັບເລກທີ 241/ລບ, ລົງວັນທີ 12 ກັນຍາ 2013 ວ່າດ້ວຍການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ສົກປີ 2013-20134;
- ອີງຕາມບົດແນະນຳ ຂອງກະຊວງແຜນການ-ການລົງທຶນ ສະບັບເລກທີ 2696/ຜທ, ລົງວັນ 16 ກັນຍາ 2013;
- ອີງຕາມແຜນພັດທະນາອຸດສາຫະກຳປຸງແຕ່ງ ແລະ ການຄ້າ ປະຈຳສົກປີ 2013-2014;

ເພື່ອເຮັດໃຫ້ດຳລັດນາຍົກລັດຖະມົນຕີ ສະບັບເລກທີ 241 /ນຍ, ລົງວັນທີ 12 ກັນຍາ 2013 ວ່າດ້ວຍການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດສົກປີ 2012-2013 ແລະ ບົດແນະນຳ ຂອງກະຊວງແຜນການ ແລະ ການລົງທຶນ ສະບັບເລກທີ 2696/ຜທ, ລົງວັນ 16 ກັນຍາ 2013 ເວົ້າລວມ, ເວົ້າສະເພາະແຜນພັດທະນາຂອງຂະແໜງອຸດສາຫະກຳ ແລະ ການຄ້າ ຖືກຈັດຕັ້ງປະຕິບັດຢ່າງມີຜົນສຳເລັດ.

## ລັດຖະມົນຕີວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຄຳສັ່ງແນະນຳດັ່ງນີ້:

1. ຄາດໝາຍຕົ້ນຕໍຂອງແຜນພັດທະນາຂະແໜງອຸດສາຫະກຳ ແລະ ການຄ້າ ສົກປີ 2012-2013:

ເອົາໃຈໃສ່ສຸ້ມເຮັດໃຫ້ເສດຖະກິດອຸດສາຫະກຳປຸງແຕ່ງ ແລະ ການຄ້າ ມີການເຕີບໂຕຢ່າງຕໍ່ເນື່ອງ ດ້ວຍການຊຸກຍູ້ສົ່ງເສີມຂະແໜງການທີ່ຕິດພັນກັບພາລະບົດບາດ ແລະ ໜ້າທີ່ຂອງກະຊວງອຸດສາຫະກຳ ແລະ ການຄ້າ ໃຫ້ມີການຂະຫຍາຍຕົວໃນອັດຕາສະເລ່ຍດັ່ງນີ້:

- ອຸດສາຫະກຳປຸງແຕ່ງ 12 % ຕໍ່ປີ;
- ມູນຄ່າຈໍລະຈອນສິນຄ້າ ພາຍໃນ 11 % ຕໍ່ປີ;
- ການສົ່ງອອກ 15 % ແລະ ການນຳເຂົ້າ 10 % ຕໍ່ປີ;
- ມູນຄ່າການຈໍລະຈອນສິນຄ້າຢູ່ໃນລະດັບ 12 %,
- ອັດຕາຂະຫຍາຍຕົວຂອງການຄ້າຂາຍຍົກ-ຂາຍຍ່ອຍ ແລະ ສ້ອມແປງຢູ່ໃນລະດັບ 9% ຕໍ່ປີ;